ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ພິທີເຊັນບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການຮ່ວມມືໃນການພັດທະນາ ລະບົບການຊຳລະຄ່າສາກລິດໄຟຟ້າ ຜ່ານ ລະບົບບັດຂອງ ທຄຕລ ລະຫວ່າງ ທຄຕລ ແລະ ບໍລິສັດ ອີວີລາວ ຈຳກັດ

ນະຄອນຫຼວງວຽງຈັນ, ວັນທີ: 04/10/2019



ວັນທີ 04 ຕຸລາ 2019, ຢູ່ທີ່ ສຳນັກງານໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຈັດພິທີເຊັນບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການຮ່ວມມືໃນການພັດທະນາ ລະບົບການຊຳລະຄ່າສາກລິດໄຟຟ້າ ຜ່ານລະບົບບັດຂອງ ທຄຕລ ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ບໍລິສັດ ອີວີລາວ ຈຳກັດ ຕາງໜ້າລົງນາມໃນຄັ້ງນີ້ ໂດຍ **ທ່ານ ພູຂົງ ຈັນທະຈັກ** , ຜູ້ອຳນວຍການໃຫຍ່ ທຄຕລ ແລະ **ທ່ານ ບຸນເລີດ ຫຼວງປະເສີດ** , ຜູ້ອຳນວຍການ ບໍລິສັດ ອີວີລາວ ຈຳກັດ. ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໂດຍ ຄະນະຜູ້ບໍລິຫານທັງສອງຝ່າຍ, ຄະນະພະແນກ, ຄະນະສູນ ແລະ ສາຂາ ຂອງ ທຄຕລ ພາຍໃນນະຄອນຫຼວງວຽງຈັນ ຕະຫຼອດຮອດພະນັກງານຂອງທັງສອງຝ່າຍ ແລະ ສື່ມວນຊົນຈາກຫຼາຍ ພາກສ່ວນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

ການບໍລິການຊຳລະຄ່າສາທາລະນຸປະໂພກຜ່ານລະບົບທະນາຄານ (ຫຼື Bill Payment) ຂອງ ທຄຕລ ໄດ້ເລີ່ມໃຫ້ ບໍລິການທຳອິດໃນປີ 2009 ແລະ ເປັນບໍລິການທີ່ໄດ້ມີການຊົມໃຊ້ຫຼາຍ. ມາຮອດປະຈຸບັນ, ທຄຕລ ໄດ້ໃຫ້ບໍລິການຊຳລະຄ່າ ສາທາລະນຸປະໂພກຮ່ວມກັບ 53 ພາກສ່ວນ ໃນນັ້ນປະກອບມີ: ການຊຳລະຄ່າໄຟຟ້າ, ຄ່ານ້ຳປະປາ, ຄ່າໂທລະສັບ, ຄ່າພາສີ-ອາກອນ, ຄ່າເຊົ່າສາຍເຄເບີ້ນ, ຄ່າບັດນ້ຳມັນເຊື້ອໄຟ, ຄ່າບັດຂ້າມຂົວມິດຕະພາບລາວ-ໄທ ແຫ່ງທີ 1 ແລະ ຊຳລະຄ່າງວດເຊົ່າສິນ ເຊື່ອ, ເຊິ່ງການບໍລິການ Bill Payment ທຄຕລ ໄດ້ພັດທະນາ ໃຫ້ສາມາດຊຳລະຜ່ານຫຼາຍຊ່ອງທາງຄື: ຜ່ານ ATM, BCEL One, i-Bank ແລະ ຜ່ານປ່ອງບໍລິການ ທຄຕລ. ກວມເອົາຕົວເລກຜູ້ນຳໃຊ້ລະບົບຊຳລະແບບອີເລັກໂທຣນິກຫຼາຍທີ່ສຸດໃນ ລະບົບທະນາຄານພາຍໃນປະເທດ ເຊິ່ງ ທຄຕລ ພວກເຮົາເຊື່ອໝັ້ນວ່າ ຖ້າຂະຫຍາຍການຊຳລະແບບອີເລັກໂທຣນິກນີ້ອອກໄປ ໃຫ້ກວ້າງຂວາງເທົ່າໃດ ກໍ່ຈະເປັນການສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ລູກຄ້າຂອງທະນາຄານໃນການທີ່ຊົມໃຊ້ການບໍລິ ການຂອງຫຼາກຫຼາຍຜູ້ປະກອບການຂຶ້ນເທົ່ານັ້ນ.

ໃນມື້ນີ້, ທຄຕລ ແລະ ບໍລິສັດ ອີວີລາວ ຈຳກັດ ກໍ່ໄດ້ມີການເຊັນບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການຮ່ວມມືໃນການພັດທະນາລະບົບການຊຳລະຄ່າສາກລົດໄຟຟ້າ ຜ່ານລະບົບບັດຂອງ ທຄຕລ. ເຊິ່ງຈະໄດ້ມີການເຊື່ອມຕໍ່ ລະບົບຜະລິດຕະພັນບັດ Smart Card ຂອງ ທຄຕລ ເຂົ້າກັບເຄື່ອງສາກໄຟ EV Box ຂອງ ບໍລິສັດ ອີວີລາວ ຈຳກັດ ເພື່ອຈະໄດ້ທຳການທົດລອງ ການຊຳລະສະສາງຄ່າສາກໄຟໃຫ້ແກ່ລົດໄຟຟ້າ. ເຊິ່ງທາງບໍລິສັດ ອີວີລາວ ຈຳກັດ ໄດ້ສ້າງ Pilot Project ກັບ ບໍລິສັດ ໄຟຟ້າລາວ ເຊິ່ງໄດ້ວາງແຜນຈະຕິດຕັ້ງ EV Charger 20 Stations ຕາມຈຸດສຳຄັນຕ່າງໆໃນນະຄອນຫຼວງວຽງຈັນ ແລະ ຈະຕິດຕັ້ງ 100 EV Chargers ໃນທົ່ວນະຄອນຫຼວງວຽງຈັນ ລວມເຖິງເສັ້ນທາງສູ່ແຂວງອື່ນໆ ໂດຍ EV Chargers ທັ້ງໝົດໃນປະເທດລາວ ຈະລົ້ງເຂົ້າລະບົບ Even ເຊິ່ງທາງບໍລິສັດ ອີວີ ລາວ ຈຳກັດ ໄດ້ຕິດຕັ້ງໄວ້ທີ່ບໍລິສັດໄຟຟ້າລາວ ເພື່ອຄວາມປອດໄພຂອງຜູ້ໃຊ້ລົດໄຟຟ້າໃນປະເທດລາວ.

ໃນເບື້ອງຕົ້ນແມ່ນຈະມີການເຊັນ MOU ຮ່ວມກັນ ເພື່ອສຶກສາໃນລາຍລະອຽດຕ່າງໆກ່ຽວກັບການຮ່ວມມືກັນ ເພື່ອກ້າວສູ່ການເຊັນສັນຍາ ເຊິ່ງໄລຍະເວລາ ສັນຍາແມ່ນ 03 ປີ ຫຼື 05 ປີ ແລະ ຈະມີການທົບທວນຜົນການຈັດຕັ້ງປະຕິບັດການຮ່ວມມືກັນໃນ ທຸກໆ 02 ປີ ແລະ ສາມາດຕໍ່ສັນຍາຮ່ວມກັນອີກໄດ້.

ການຮ່ວມມື ລະຫວ່າງ ທຄຕລ ແລະ ບໍລິສັດ ອີວີລາວ ຈຳກັດ ຖືເປັນໂອກາດອັນດີຂອງທັງ 2 ຝ່າຍ ໃນການຮ່ວມມືກັນພັດທະນາ ທາງດ້ານລະບົບເຕັກໂນໂລຊີໃນລະບົບການຊຳລະສະສາງຜ່ານທາງທະນາຄານ ແລະ ຍັງໄດ້ມີສ່ວນຮ່ວມຕໍ່ການເອົາໃຈໃສ່ດ້ານສິ່ງແວດລ້ອມ ແລະ ສັງຄົມ. ທັງນີ້ກໍເພື່ອແນໃສ່ເພີ່ມຄວາມສະດວກສະບາຍ ແລະ ທັນສະໄໝ ແກ່ລູກຄ້າຂອງທັງສອງຝ່າຍໃຫ້ນັບມື້ນັບຫຼາຍຂຶ້ນ.

ນະໂອກາດນີ້ຂໍສະແດງຄວາມຂອບໃຈມາຍັງລູກຄ້າທຸກທ່ານທີ່ນຳໃຊ້ຜະລິດຕະພັນ ແລະ ບໍລິການ ຂອງ ທຄຕລ ຕະຫຼອດມາ. ທຄຕລ ຈະສືບຕໍ່ພັດທະນາລະບົບການບໍລິການໃຫ້ມີຄວາມທັນສະໄໝ ແລະ ສືບຕໍ່ຮ່ວມມືກັບພາກສ່ວນອື່ນໆ ເພື່ອອຳນວຍຄວາມສະດວກໃນການຊຳລະສະສາງຕ່າງໆຂອງລູກຄ້າ ໃນຍຸກແຫ່ງການບໍລິການທະນາຄານແບບດິຈິຕໍ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ
Call Center: 1555, Facebook: BCEL Bank, Website: www.bcel.com.la